MID-BCC – Communications for Change in Infectious Diseases in Greater Mekong Subregion

# ການນຳໃຊ້ລະບົບຮັບ-ສົ່ງຂໍ້ຄວາມ (SMS) ຜ່ານ ໂທລະສັບມືຖື ເຂົ້າໃນການແລກປ່ຽນຂໍ້ມູນໃນສະພາວະອາດເກີດມີ ການລະບາດ ຂອງພະຍາດໄຂ້ຫວັດສັດປີກ

ກອງປະຊຸມຖອດຖອນບົດຮຽນ

5-6 ກັນຍາ 2012, ໂຮງແຮມ Mercure, ນະຄອນຫຼວງວຽງຈັນ

ທ່ານນາງ ຈັນທິລາ ກອງທອງທິບ

USAID
FROM THE AMERICAN PEOPLE

# ຄວາມເປັນມາ

ສປປ ລາວ ມີພົນລະເມືອງ 6.256.197 ຄົນ, ເພດຍິງມີ 3.133.059 ຄົນ ໃນນັ້ນສະມາຊິກສະຫະພັນແມ່ຍິງ ມີ 958.719 ຄົນ. ມີສາຍໃຍການຈັດຕັ້ງແຕ່ຂັ້ນສູນກາງຮອດຂັ້ນແຂວງ-ເມືອງ-ບ້ານ. ແມ່ຍິງໄດ້ປະກອບສ່ວນເຂົ້າໃນທຸກຂົງເຂດວຽກງານ ເຊິ່ງອົງການຈັດຕັ້ງສະຫະພັນແມ່ຍິງໄດ້ເປັນຕົວແທນແຫ່ງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ. ບັນດາສະມາຊິກສະຫະພັນແມ່ຍິງ ແມ່ນໄດ້ປະກອບສ່ວນໃນຫຼາຍໆກິດຈະກໍາ ແລະ ໃນນັ້ນປະກອບມີກິດຈະກໍາດ້ານສາທາ ແລະ ໂພສະນາການ ໃນກຸ່ມແມ່ຍິງ ແລະ ເດັກນ້ອຍ ທີ່ຢູ່ເຂດຫ່າງໄກສອກຫຼີກ.

ນັບແຕ່ປີ 2006 ເປັນຕົ້ນມາສູນກາງສະຫະພັນແມ່ຍິງລາວ ໄດ້ຮ່ວມປະຕິບັດກິດຈະກໍາກັບ FHI360 (AED) ໂດຍໄດ້ງົບປະມານສະໜັບສະໜູນ ຈາກ USAID ໃນຮ່ວງງົບປະມານ ປີ 2007 ຂອງ AI.COMM. ສະຫະພັນແມ່ຍິງໄດ້ຈັດຕັ້ງປະຕິບັດກິດຈະກໍາ ໃນການຕ້ານ ແລະ ຄວບຄຸມພະຍາດ ໄຂ້ຫວັດສັດປີກ ເລີ່ມຕັ້ງແຕ່ການພັດທະນາຄູ່ມືໃນການຝຶກອົບຮົມ ແລະ ລົງມືຝຶກອົບຮົມ. ໃນໄລຍະທີ່ມີການລະບາດຂອງພະຍາດ ສະຫະພັນແມ່ຍິງລາວ ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການໃຫ້ ຂໍ້ມູນຂ່າວສານ - ສຸຂະສຶກສາ ຢ່າງທັນການແກ່ບັນດາຊຸມຊົນ.

FHI360 ເຫັນໄດ້ເຖິງ ຄວາມສາມາດ ແລະ ຄວາມກະຕືລືລົ້ນ ຂອງສະຫະພັນແມ່ຍິງ ຈິ່ງໄດ້ສືບຕໍ່ເສີມຂະຫຍາຍ ແລະ ສະໜັບສະໜູນດ້ານທຶນຮອນໃຫ້ສະຫະພັນແມ່ຍິງ ໄດ້ເຂົ້າມາມີສ່ວນຮ່ວມຕ້ານ ແລະ ຄວບຄຸມການລະບາດຂອງພະຍາດ ໂດຍການສົ່ງຂໍ້ມູນລາຍງານຜ່ານລະບົບໂທລະສັບມືຖື.

# ຈຸດປະສົງຂອງໂຄງການ:

- ເພື່ອເສີມຂະຫຍາຍວຽກງາ ກາ ພົວພັ ລະຫວ່າງສະມາຊິກສະຫະພັ ແມ່ຍິງຂັ້ນສູນກາງ ແລະ ທ້ອງຖິ່ນ.
- ເພື່ອຂະຫຍາຍຕາໜ່າງວຽກງານສື່ສານແລກປ່ຽນຂໍ້ມູ ທີ່ເປັນປະໂຫຍດ.
- ເພື່ອອຳນວຍຄວາມສະດວກໃນການສື່ສານໃຫ້ວ່ອງໄວ ແລະ ທວງທັ ກັບເວລາໃ ກາ ລາຍງາ ສະພາບກາ .
- ເພື່ອອຳນວຍຄວາມສະດວກໃ ກາ ຕິດຕາມສະພາບກາ ໂດຍສະເພາະແມ່ ກາ ລາຍງາ ກ່ຽວກັບພະຍາດລະບາດ.
- ຂະຫຍາຍຄວາມຮັບຮູ້ກ່ຽວກັບກາ ຳໃຊ້ເທັກໂ ໂລຊີໂດຍການສື່ສານຜ່າ ລະບົບໄທລະສັບມືຖື

# ຈຸດປະສົງຂອງການນຳໃຊ້ລະບົບ Panel:

- ນຳສະເໜີການນຳໃຊ້ ເທັກໂນໂລຊີ ແບບ **panel** ໃຫ້ແກ່ ບັນດາ ສະມາຊິກສະຫະພັນແມ່ຍິງນະຄອນຫຼວງ, ເມືອງທີ່ຢູ່ເຂດຊາຍແດນ, ສະຫະພັນແມ່ຍິງແຂວງບໍ່ແກ້ວ, ຫຼວງນ້ຳທາ, ແລະ ສະຫວັນນະເຂດ.
- ເປີດໂອກາດ ໃຫ້ບັນດາສະມະຊິກ ທີ່ຖືກເລືອກ ໄດ້ເຂົ້າຮ່ວມການສົ່ງ **SMS** ໃນລະບົບສະມາຊິກ **panel** ທີ່ນຳໃຊ້ເປັນພາສາລາວ.
- ເຂົ້າຮ່ວມໃນການທົດສອບແບບສອບຖາມ ທີ່ໃຊ້ລະບົບ ໂທລະສັບມືຖື ຫຼື ເອີ້ນວ່າ **mobile pone panel (*mpanel*).**

# ການຈັດຝຶກອົບຮົມຂັ້ນນະຄອນຫລວງ-ແຂວງ:

1. ະຄອ ຫລວງວຽງຈັ ຈຳ ວ 2 ຄັ້ງ
   + ກາ ຝຶກອົບຮົມເພື່ອທົດສອບລະບົບ
     ຜູ້ເຂົ້າຮ່ວມຈຳ ວ 20 ຄົ
   + ກາ ຝຶກອົບຮົມຄູຝຶກ
     ຜູ້ເຂົ້າຮ່ວມຈຳ ວ 20 ຄົ
2. ແຂວງຫລວງ ້ຳທາ
     ຜູ້ເຂົ້າຮ່ວມຈຳ ວ 25 ຄົ
3. ແຂວງບໍ່ແກ້ວ
     ຜູ້ເຂົ້າຮ່ວມຈຳ ວ 24 ຄົ
4. ແຂວງສະຫວັ ະເຂດ
     ຜູ້ເຂົ້າຮ່ວມຈຳ ວ 27 ຄົ






# ຂັ້ນຕອນການເຂົ້າສູ່ລະບົບໂດຍຫຍໍ້:

- ແຈ້ງການຄັດເລືອກຜູ້ເຂົ້າຮ່ວມ ແລະ ຕອບແບບຟອມຄັດເລືອກ.
- ການເຂົ້າສູ່ລະບົບລົງທະບຽນສະໝັກເຂົ້າເປັນສະມາຊິກ **Mpanel.**
- ສະມາຊິກທີ່ເຂົ້າສູ່ລະບົບໄດ້ ຈຳນວນ 71 ທ່ານເຄື່ອນໄຫວການຕອບແບບສອບຖາມແຕ່ລະອາທິດ.
- ໃນ 6 ອາທິດ ຜູ້ເຂົ້າຮ່ວມຈະໄດ້ຮັບ ຂໍ້ຄວາມທີ່ສາມາດເຊື່ອມຕໍ່ເຂົ້າລະບົບ(**Link**)ໄປຫາແບບສອບຖາມ ເພື່ອດຳເນີນການຕອບຄຳຖາມໃນທຸກໆອາທິດ.
- ເຊື່ອມຕໍ່ເຂົ້າລະບົບ(**Link**) ທີ່ນຳໄປຫາແບບສອບຖາມນັ້ນ ແມ່ນເປັນພາສາລາວ ທີ່ປະກອບມີ ປະມານ 6 ຄຳຖາມ, ແຕ່ຕ້ອງໃຊ້ອິນເຕີເນັດໃນການເຊື່ອມຕໍ່ເຂົ້າສູ່ລະບົບ**Mpanel.**





# ລະບົບການເກັບກຳຂໍ້ມູນ:

- ຫຼັງຈາກຜູ້ເຂົ້າຮ່ວມໄດ້ຕອບຄຳຖາມເປັນທີ່ຮຽບຮ້ອຍ ແລ້ວ ຂໍ້ມູນທັງໝົດຈະຖືກສົ່ງໄປຍັງຖານຂໍ້ມູນຢ່າງອັດຕະໂນມັດ (ແບບອອນລາຍ).
- ຜູ້ເກັບກຳຂໍ້ມູນໃນຖານຂໍ້ມູນ ສາມາດຕິດຕາມ ແລະ ຮູ້ວ່າຜູ້ເຂົ້າຮ່ວມໝາຍເລກໃດທີ່ບໍ່ປະຕິບັດຕາມຂັ້ນຕອນ ຫຼື ບໍ່ຕອບແບບສອບຖາມ ຫຼື ຫາຍໄປຈາກລະບົບເລີຍ.





# ສິ່ງທີ່ພົບໃນໄລຍະການຕອບແບບສອບຖາມ:

- ກ່ຽວກັບສຸຂະພາບຄືນ: ສະມາຊິກສະຫະພັນແມ່ຍິງ ແມ່ນໄດ້ເຂົ້າຮ່ວມກິດຈະກຳຮ່ວມກັບພະນັກງານຂັ້ນເມືອງ ເລີ່ມຕັ້ງແຕ່ການໃຫ້ຂໍ້ມູນຂ່າວສານກ່ຽວກັບສຸຂະພາບແກ່ຊຸມຊົນ ແລະ ຄົວເຮືອນ.
- ພວກເຂົາມີສ່ວນຮ່ວມ ໃນການສະໜັບສະໜູນສື່ມວນຊົນທ້ອງຖິ່ນໃຫ້ມີການໃຫ້ຂໍ້ມູນຂ່າວສານທາງໂທລະໂຄ່ງບ້ານ ແລະ ອື່ນໆ.
- ສະມາຊິກສະຫະພັນແມ່ຍິງ ສາມາດລາຍງານອາການພະຍາດທີ່ພວກເຂົາສັງເກດເຫັນ ເຊິ່ງນັ້ນມັນຈະນຳໄປຫາການບົ່ງມະຕິພະຍາດໄດ້.

# ສິ່ງທີ່ພົບໃນໄລຍະການຕອບແບບສອບຖາມ:

- ກ່ຽວກັບສຸຂະພາບບສັດ ເຊັ່ນໄຂ້ຫວັດສັດປີກ ນັ້ນ ພວກເຂົາສາມາດໃຫ້ຂໍ້ມູນຂ່າວສານແກ່ຊຸມຊົນ ແລະ ພ້ອມດຽວກັນກໍ່ມີການປະສານງານກັບພາກ ສ່ວນທີ່ກ່ຽວຂ້ອງ ເຊັ່ນຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ ໃນເມືອງຂອງເຂົາເຈົ້າ.

- ພ້ອມດຽວກັນ ກໍ່ໄດ້ມີການສັງເກດການເຈັບເປັນ ແລະ ການຕາຍຂອງສັດປີກ, ໝູ ແລະ ງົວຄວາຍ ໄປພ້ອມໆ ກັນ.

# ຜົນໄດ້ຮັບໃນການຈັດຕັ້ງປະຕິບັດໂຄງການ Mpanel

- ສະມາຊິກສະຫະພັນແມ່ຍິງ ໄດ້ເຂົ້າເຖິງລະບົບການສື່ສານການແລກປ່ຽນຂໍ້ມູນຂ່າວສານທີ່ທັນຍຸກທັນສະໄໝ.
- ສະມາຊິກສະພັນແມ່ຍິງ ໄດ້ຮັບຄວາມຮູ້ໃນການນຳໃຊ້ລະບົບ Mpanel ເຂົ້າໃນການລາຍງານສະພາບ ການລະບາດຂອງເຊື້ອພະຍາດ.
- ມີຄວາມສາມາດອະທິບາຍ ແລະ ແລກປ່ຽນຂໍ້ມູນວິທີການນຳໃຊ້ ແລະ ເຂົ້າສູ່ລະບົບ.
- ມີຄວາມຮູ້ພື້ນຖານໃນການຕອບ-ຮັບຂໍ້ຄວາມສັ້ນທີ່ສົ່ງເຂົ້າຜ່ານມາໃນໂທລະສັບມືຖືຂອງຕົນ.

# ບົດຮຽນທີ່ຖອດຖອນໄດ້

- ການນຳໃຊ້ SMS ແມ່ນສິ່ງທີ່ໄວ ແລະ ມີປະສິດທິພາບ ໃນການລາຍງານ ແລະ ແລກປ່ຽນຂໍ້ມູນຂ່າວສານ. ແຕ່ວ່າລະບົບນີ້ແມ່ນອີງໃສ່ ຄວາມໄວຂອງສັນຍານອິນເຕີເນັດ ເຊັ່ນດຽວກັນ, ແລະ ນີ້ແມ່ນບັນຫາທີເກີດຂື້ນໃນເວລາຈັດຕັ້ງປະຕິບັດ ໂດຍສະເພາະແມ່ນບັນດາແຂວງຕ່າງໆ.

- ສະມາຊິກສະຫະພັນແມ່ຍິງ ສາມາດເປັນຕາໜ່າງ ໃນການຕິດຕາມ, ເຝົ້າລະວັງບັນດາພະຍາດທີ່ອາດເກີດຂື້ນ ໂດຍຜ່ານລະບົບຮັບ-ສົ່ງຂໍ້ ຄວາມຜ່ານໂທລະສັບມືຖື Mobile SMS.

- ຖ້າຫາກສືບຕໍ່ໃຫ້ການສະໜັບສະໜູນການນຳໃຊ້ລະບົບນີ້ ຈະສະດວກ ໃຫ້ແກ່ການຮັບ-ສົ່ງຂໍ້ມູນວຽກງານສະຫະພັນແມ່ຍິງລະຫວ່າງສູນກາງ ແລະ ທ້ອງຖິ່ນ.

- ຖ້າການນຳ ສະໜັບສະໜູນ ການນຳໃຊ້ລະບົບນີ້ ມັນກໍ່ສາມາດ ນຳໄປໃຊ້ໃນວຽກງານອື່ນໆ ຂອງສະຫະພັນໄດ້

# ຂໍຂອບໃຈ